/

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ພັກປະຊາຊົນປະຕິວັດລາວ

ກົມການເມືອງສູນກາງພັກ

ເລກທີ 14 /ກມສພ

ນະຄອນຫຼວງວຽງຈັນ, ວັນທີ 14 ພຶດສະພາ 2024

# ມະຕິຕົກລົງ

## ວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບ ຊີ້ນຳລະດັບຊາດເພື່ອສະເຫຼີມສະຫຼອງສາມວັນປະຫວັດສາດ

- ອີງໃສ່ ໜັງສືສະເໜີຂອງ ຄະນະໂຄສະນາອົບຮົມສູນກາງພັກ ສະບັບເລກທີ 416/ຄອສພ, ລົງວັນທີ 28 ມີນາ 2024.
- ອີງຕາມ ທິດຊີ້ນຳໃນກອງປະຊຸມຂອງກົມການເມືອງ ແລະ ຄະນະເລຂາທິການສູນກາງພັກ ຄັ້ງວັນທີ 10 ເມສາ 2024.

## ກົມການເມືອງສູນກາງພັກ ຕົກລົງ:

**ມາດຕາ 1:** ແຕ່ງຕັ້ງຄະນະຮັບຜິດຊອບຊີ້ນຳລະດັບຊາດ ເພື່ອສະເຫຼີມສະຫຼອງ ສາມວັນປະຫວັດສາດ ຄື: ວັນສ້າງຕັ້ງພັກປະຊາຊົນປະຕິວັດລາວ ຄົບຮອບ 70 ປີ, ວັນສະຖາປະນາ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຄົບຮອບ 50 ປີ ແລະ ວັນເກີດປະທານ ໄກສອນ ພົມວິຫານ ຄົບຮອບ 105 ປີ ເຊິ່ງປະກອບດ້ວຍບັນດາສະຫາຍ ດັ່ງລຸ່ມນີ້:

1. ສະຫາຍ ບຸນທອງ ຈິດມະນີ — ກຳມະການກົມການເມືອງສູນກາງພັກ, ຜູ້ປະຈຳການຄະນະເລຂາທິການສູນກາງພັກ, ຮອງປະທານປະເທດ ເປັນປະທານ.
2. ສະຫາຍ ພົອ ຈັນສະໝອນ ຈັນຍາລາດ — ກຳມະການກົມການເມືອງສູນກາງພັກ, ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງປ້ອງກັນປະເທດ ເປັນຮອງປະທານ.
3. ສະຫາຍ ສິນລະວົງ ຄຸດໄພທູນ — ກຳມະການກົມການເມືອງສູນກາງພັກ, ປະທານສູນກາງແນວລາວສ້າງຊາດ ເປັນຮອງປະທານ.
4. ສະຫາຍ ກິແກ້ວ ໄຊຄຳພິທູນ — ກຳມະການກົມການເມືອງສູນກາງພັກ, ຮອງນາຍົກລັດຖະມົນຕີ ເປັນຮອງປະທານ, ຜູ້ປະຈຳການ.

| | |
|---|---|
| 5. ສະຫາຍ ນາງ ສີໃສ ລືເດດມູນສອນ | ກຳມະການກົມການເມືອງສູນກາງພັກ, ຫົວໜ້າຄະນະຈັດຕັ້ງສູນກາງພັກ ເປັນຄະນະ. |
| 6. ສະຫາຍ ສະເຫຼີມໄຊ ກົມມະສິດ | ກຳມະການກົມການເມືອງສູນກາງພັກ, ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການຕ່າງປະເທດ ເປັນຄະນະ. |
| 7. ສະຫາຍ ຄຳພັນ ເຜີຍຍະວົງ | ເລຂາທິການສູນກາງພັກ, ຫົວໜ້າຄະນະໂຄສະນາອົບຮົມສູນກາງພັກ, ປະທານສະພາທິດສະດີສູນກາງພັກ ເປັນຄະນະ. |
| 8. ສະຫາຍ ທອງສະລິດ ມັງໜໍ່ເມກ | ເລຂາທິການສູນກາງພັກ, ຫົວໜ້າຫ້ອງວ່າການສູນກາງພັກ ເປັນຄະນະ. |
| 9. ສະຫາຍ ຈະເລີນ ເຢຍປາວເຮີ | ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ ເປັນຄະນະ. |
| 10. ສະຫາຍ ວິໄລວົງ ບຸດດາຄຳ | ກຳມະການສູນກາງພັກ, ລັດຖະມົນຕີກະຊວງພາຍໃນ ເປັນຄະນະ. |
| 11. ສະຫາຍ ເພັດ ພົມພິພັກ | ກຳມະການສູນກາງພັກ, ລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ ເປັນຄະນະ. |
| 12. ສະຫາຍ ສັນຕິພາບ ພົມວິຫານ | ກຳມະການສູນກາງພັກ, ລັດຖະມົນຕີກະຊວງການເງິນ ເປັນຄະນະ. |
| 13. ສະຫາຍ ບົວຄົງ ນາມມະວົງ | ກຳມະການສູນກາງພັກ, ຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ເປັນຄະນະ. |
| 14. ສະຫາຍ ນາງ ສວນສະຫວັນ ວິຍະເກດ | ກຳມະການສູນກາງພັກ, ລັດຖະມົນຕີກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເປັນຄະນະ. |
| 15. ສະຫາຍ ເລັດ ໄຊຍະພອນ | ກຳມະການສູນກາງພັກ, ປະທານຄະນະບໍລິຫານງານສູນກາງສະຫະພັນກຳມະບານລາວ ເປັນຄະນະ. |
| 16. ສະຫາຍ ບຸນແຝງ ພູມມະໄລສິດ | ກຳມະການສູນກາງພັກ, ລັດຖະມົນຕີກະຊວງສາທາລະນະສຸກ ເປັນຄະນະ. |
| 17. ສະຫາຍ ນາງ ອາລີ ວົງໜໍ່ບຸນທຳ | ກຳມະການສູນກາງພັກ, ປະທານຄະນະບໍລິຫານງານສູນກາງສະຫະພັນແມ່ຍິງລາວ ເປັນຄະນະ. |

18. ສະຫາຍ ທອງສະຫວັນ ພົມວິຫານ — ກຳມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ເປັນຄະນະ.

19. ສະຫາຍ ອາດສະພັງທອງ ສີພັນດອນ — ກຳມະການສູນກາງພັກ, ເຈົ້າຄອງນະຄອນຫຼວງວຽງຈັນ ເປັນຄະນະ.

20. ສະຫາຍ ມອນໄຊ ລາວມົ່ວຊົ່ງ — ກຳມະການສຳຮອງສູນກາງພັກ ເລຂາຄະນະບໍລິຫານງານສູນກາງຊາວໜຸ່ມ ປະຊາຊົນປະຕິວັດລາວ ເປັນຄະນະ.

21. ສະຫາຍ ພົດ ຄຳກົ່ງ ພຸຍຫຼ້າມະນີວົງ — ຮອງລັດຖະມົນຕີກະຊວງປ້ອງກັນຄວາມສະຫງົບ ເປັນຄະນະ.

<u>ມາດຕາ 2:</u> ມອບໃຫ້ຄະນະຊີ້ນຳລະດັບຊາດ ພ້ອມກັນປຶກສາຫາລືວາງແຜນການເຄື່ອນໄຫວລະອຽດຕົວຈິງ ແລະ ແຕ່ງຕັ້ງອະນຸກຳມະການ ເພື່ອຮັບຜິດຊອບແຕ່ລະຂົງເຂດວຽກງານ ຕາມຄວາມເໝາະສົມ.

<u>ມາດຕາ 3:</u> ໃຫ້ບັນດາອົງການຂອງພັກ, ຂອງລັດ ແລະ ບັນດາອົງການຈັດຕັ້ງມະຫາຊົນຂັ້ນຕ່າງໆ ນັບທັງຢູ່ສູນກາງ ແລະ ທ້ອງຖິ່ນ; ພ້ອມດ້ວຍບັນດາສະຫາຍ ທີ່ໄດ້ຮັບການແຕ່ງຕັ້ງ ຈົ່ງຮັບຮູ້ ແລະ ປະຕິບັດຕາມມະຕິຕົກລົງສະບັບນີ້ຢ່າງເຂັ້ມງວດ.

<u>ມາດຕາ 4:</u> ມະຕິຕົກລົງສະບັບນີ້ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ຕ. ກົມການເມືອງສູນກາງພັກ

ເລຂາທິການໃຫຍ່ ຄະນະບໍລິຫານງານສູນກາງພັກ

**ທອງລຸນ ສີສຸລິດ**